# ພິທີມອບ-ຮັບເງິນບໍລິຈາກຂອງສັງຄົມ ຜ່ານ BCEL OneHeart

## ໂຄງການ "ລະດົມທຶນໃຫ້ການຊ່ວຍເຫຼືອເພື່ອຕ້ານໂລກລະບາດ COVID-19" (ຄັ້ງທີ 1)

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ຕາງໜ້າຜູ້ຮ່ວມບໍລິຈາກຜ່ານ BCEL OneHeart **ໂຄງການ "ລະດົມທຶນໃຫ້ການຊ່ວຍເຫຼືອເພື່ອຕ້ານໂລກລະບາດ COVID-19"** ໄດ້ຈັດພິທີມອບ-ຮັບເງິນທີ່ລະດົມໄດ້ຈາກສັງຄົມໃຫ້ກັບ 7 ໂຮງໝໍ ທີ່ຮັບຜິດຊອບໃນການປ້ອງກັນ, ຄວບຄຸມ-ແກ້ໄຂການລະບາດພະຍາດ **COVID-19** ໂດຍມອບເປັນວັດຖຸອຸປະກອນທາງການແພດທີ່ຈຳເປັນ ເພື່ອຕ້ານ COVID-19 ເຊັ່ນ: ໜ້າກາກອະນາໄມ, ເຈວແອກໍຮໍລ້າງມື, ຖົງມື, ເຄື່ອງວັດແທກຄວາມດັນ ແລະ ເຄື່ອງວັດແທກອຸນຫະພູມ ເປັນຕົ້ນ. ລວມມູນຄ່າທັງໝົດ **130.600.000 ກີບ (ໜຶ່ງຮ້ອຍສາມສິບລ້ານຫົກແສນກີບ)** ພິທີມອບ-ຮັບ ໄດ້ຈັດຂຶ້ນໃນລະຫວ່າງວັນທີ 30 ເມສາ - 8 ພຶດສະພາ 2020 ເຊິ່ງໃນວັນທີ ວັນທີ 30 ເມສາ 2020 ໄດ້ຕາງໜ້າຜູ້ບໍລິຈາກມອບໃຫ້ 4 ໂຮງໝໍ ລວມມີ ໂຮງໝໍມິດຕະພາບ, ໂຮງໝໍມະໂຫສົດ, ໂຮງໝໍສູນກາງ 103 ກອງທັບ, ໂຮງໝໍເຊດຖາທິຣາດ, ໃຫ້ກຽດມອບໂດຍ ທ່ານ ສົມສຸກ ດວງດາລາ ຫົວໜ້າພະແນກການຕະຫຼາດ ທຄຕລ, ທ່ານ ຕຸລາລິດ ພົມມະສຸລິນ ຫົວໜ້າອະນຸກຳມະການ BCEL OneHeart ແລະ ຄະນະບໍລິຫານງານສາມອົງການຈັດຕັ້ງມະຫາຊົນ ທຄຕລ ລາຍລະອຽດດັ່ງນີ້:

1. ໂຮງໝໍມິດຕະພາບ ປະກອບມີ ໜ້າກາກອະນາໄມ 5.000 ອັນ, ເຈວແອກໍຮໍລ້າງມື 10.000 ມລ, ຖົງມື 500 ຄູ່, ເຄື່ອງວັດແທກອຸນຫະພູມ 10 ເຄື່ອງ ແລະ ເຄື່ອງວັດແທກຄວາມດັນ 10 ເຄື່ອງ **ລວມມູນຄ່າ 23.950.000 ກີບ (ຊາວສາມລ້ານເກົ້າແສນຫ້າສິບພັນກີບ)** ໃຫ້ກຽດຮັບໂດຍ ທ່ານ ດຣ ສະໜອງ ທອງຊະນະ ຜູ້ອຳນວຍການໂຮງໝໍມິດຕະພາບ ພ້ອມດ້ວຍຄະນະ.
2. ໂຮງໝໍມະໂຫສົດ ປະກອບມີ ໜ້າກາກອະນາໄມ 5.000 ອັນ, ເຈວແອກໍຮໍລ້າງມື 10.000 ມລ, ຖົງມື 500 ຄູ່, ເຄື່ອງວັດແທກອຸນຫະພູມ 10 ເຄື່ອງ ແລະ ເຄື່ອງວັດແທກຄວາມດັນ 10 ເຄື່ອງ **ລວມມູນຄ່າ 23.950.000 ກີບ (ຊາວສາມລ້ານເກົ້າແສນຫ້າສິບພັນກີບ)** ໃຫ້ກຽດຮັບໂດຍ ທ່ານ ດຣ ພິສິດ ພຸດສະຫວັນ ຜູ້ອຳນວຍການໂຮງໝໍມະໂຫສົດ ພ້ອມດ້ວຍຄະນະ.
3. ໂຮງໝໍສູນກາງ 103 ກອງທັບ ປະກອບມີ ໜ້າກາກອະນາໄມ 5.000 ອັນ, ເຈວແອກໍຮໍລ້າງມື 10.000 ມລ, ຖົງມື 500 ຄູ່, ເຄື່ອງວັດແທກອຸນຫະພູມ 10 ເຄື່ອງ ແລະ ເຄື່ອງວັດແທກຄວາມດັນ 10 ເຄື່ອງ **ລວມມູນຄ່າ 23.950.000 ກີບ (ຊາວສາມລ້ານເກົ້າແສນຫ້າສິບພັນກີບ)** ໃຫ້ກຽດຮັບໂດຍ ທ່ານ ພັອ ດຣ ສຸລິພັນ ເພັດຈັນທະລາ ຫົວໜ້າການທະຫານອຳນວຍການໂຮງໝໍສູນກາງ 103 ກອງທັບ ພ້ອມດ້ວຍຄະນະ.
4. ໂຮງໝໍເຊດຖາທິຣາດ ປະກອບມີ ໜ້າກາກອະນາໄມ 2.500 ອັນ, ເຈວແອກໍຮໍລ້າງມື 10.000 ມລ, ຖົງມື 500 ຄູ່, ເຄື່ອງວັດແທກອຸນຫະພູມ 10 ເຄື່ອງ ແລະ ເຄື່ອງວັດແທກຄວາມດັນ 10 ເຄື່ອງ **ລວມມູນຄ່າ 17.200.000 ກີບ (ສິບເຈັດລ້ານສອງແສນກີບ)** ໃຫ້ກຽດຮັບໂດຍ ທ່ານ ດຣ ໄພວັນ ແກ້ວປະເສີດ ຜູ້ອຳນວຍການໂຮງໝໍເຊດຖາທິຣາດ ພ້ອມດ້ວຍຄະນະ.

ຕໍ່ມາໃນວັນທີ 8 ພຶດສະພາ 2020, ທຄຕລ ຕາງໜ້າຜູ້ບໍລິຈາກໂຄງການດັ່ງກ່າວໄດ້ສືບຕໍ່ມອບເຄື່ອງມືທາງການແພດ ໃຫ້ອີກ 3 ໂຮງໝໍດັ່ງນີ້:

5. ໂຮງໝໍ ແຂວງຫຼວງພະບາງ ປະກອບມີ ໜ້າກາກອະນາໄມ 2.450 ອັນ, ເຈວແອກໍຮໍລ້າງມື 10.000 ມລ, ຖົງມື 500 ຄູ່, ເຄື່ອງວັດແທກອຸນຫະພູມ 10 ເຄື່ອງ ແລະ ເຄື່ອງວັດແທກຄວາມດັນ 10 ເຄື່ອງ **ລວມມູນຄ່າ 17.200.000 ກີບ (ສິບເຈັດລ້ານສອງແສນກີບ)** ໃຫ້ກຽດມອບໂດຍ ທ່ານ ບຸນທັນ ແກ້ວບຸບຜາ ຫົວໜ້າ ທຄຕລ ສາຂາຫຼວງພະບາງ ພ້ອມດ້ວຍຄະນະ. ໃຫ້ກຽດຮັບໂດຍ ທ່ານ ດຣ ທອງພຸດ ສຸກກະເສີມ ຜູ້ອຳນວຍການໂຮງໝໍ ແຂວງຫຼວງພະບາງ ພ້ອມດ້ວຍຄະນະ.
6. ໂຮງໝໍ ເມືອງບໍລິຄັນ ແຂວງບໍລິໄຊ ປະກອບມີ ໜ້າກາກອະນາໄມ 1.500 ອັນ, ເຈວແອກໍຮໍລ້າງມື 7.500 ມລ, ຖົງມື 250 ຄູ່, ເຄື່ອງວັດແທກອຸນຫະພູມ 10 ເຄື່ອງ ແລະ ເຄື່ອງວັດແທກຄວາມດັນ 5 ເຄື່ອງ **ລວມມູນຄ່າ 12.850.000 ກີບ (ສິບສອງລ້ານແປດແສນຫ້າສິບພັນກີບ)** ໃຫ້ກຽດມອບໂດຍ ທ່ານ ພອນປະເສີດ ແສງສະຫວ່າງ ຮອງຫົວໜ້າ ທຄຕລ ສາຂາບໍລິຄຳໄຊ ພ້ອມດ້ວຍຄະນະ. ໃຫ້ກຽດຮັບໂດຍ ທ່ານ ນາງ ສີດາ ພັນທະລາ ຮອງເຈົ້າເມືອງບໍລິຄັນ, ທ່ານ ດຣ ຄຳແຫວນ ເພັງຜາແກ້ວ ຜູ້ອຳນວຍການ ໂຮງໝໍ ເມືອງບໍລິຄັນ ແຂວງບໍລິໄຊ ພ້ອມດ້ວຍຄະນະ.
7. ໂຮງໝໍ ເມືອງປາກງື່ມ ປະກອບມີ ໜ້າກາກອະນາໄມ 1.000 ອັນ, ເຈວແອກໍຮໍລ້າງມື 7.500 ມລ, ຖົງມື 250 ຄູ່, ເຄື່ອງວັດແທກອຸນຫະພູມ 10 ເຄື່ອງ ແລະ ເຄື່ອງວັດແທກຄວາມດັນ 5 ເຄື່ອງ **ລວມມູນຄ່າ 11.500.000 ກີບ (ສິບເອັດລ້ານຫ້າແສນກີບ)** ໃຫ້ກຽດມອບໂດຍ ທ່ານ ວົງສັກ ລັດຕະນະວົງ ຫົວໜ້າ ທຄຕລ ສາຂາດົງໂດກ ພ້ອມດ້ວຍຄະນະ.ໃຫ້ກຽດຮັບໂດຍ ທ່ານ ດຣ ຄຳຫຼ້າ ເພັດລາວັນ ຜູ້ອຳນວຍການ ໂຮງໝໍ ເມືອງປາກງື່ມ ພ້ອມດ້ວຍຄະນະ.

ພິທີຕາງໜ້າຜູ້ບໍລິຈາກ ມອບ-ຮັບເຄື່ອງວັດຖຸອຸປະກອນທາງການແພດຕ້ານ COVID-19 ໃຫ້ທັງ 7 ໂຮງໝໍ ແມ່ນໄດ້ດຳເນີນໄປຢ່າງອົບອຸ່ນ ໂອກາດດັ່ງກ່າວ ຕາງໜ້າທັງ 7 ໂຮງໝໍ ກໍໄດ້ກ່າວສະແດງຄວາມຮູ້ບຸນຄຸນ ແລະ ກ່າວຂອບໃຈເປັນຢ່າງສູງ ມາຍັງຜູ້ໃຈບຸນທີ່ຮ່ວມແບ່ງປັນນ້ຳໃຈ ຊ່ວຍເຫຼືອດ້ວຍການບໍລິຈາກຜ່ານລະບົບ BCEL OneHeart ເນື່ອງຈາກວ່າອຸປະກອນທີ່ທາງໂຮງໝໍໄດ້ຮັບນັ້ນລ້ວນແລ້ວແຕ່ມີຄວາມຈຳເປັນໃຊ້ເຂົ້າໃນການຮັບມືເພື່ອຕ້ານການແຜ່ລະບາດພະຍາດ COVID-19 ແລະ ຈະຈັດສັນເຄື່ອງທີ່ຮັບ ນຳໃຊ້ເຂົ້າໃນວຽກງານເພື່ອໃຫ້ເກີດປະໂຫຍດສູງສຸດ.

ໂຄງການ "ລະດົມທຶນໃຫ້ການຊ່ວຍເຫຼືອເພື່ອຕ້ານໂລກລະບາດ COVID-19" ແມ່ນໂຄງການທີ່ເປີດຂຶ້ນເພື່ອລະດົມທຶນຊື້ອຸປະກອນການແພດໃຫ້ການຊ່ວຍເຫຼືອຕ້ານໂລກລະບາດ COVID-19 ແກ່ພາກສ່ວນ ຫຼື ອົງກອນທີ່ຮັບຜິດຊອບໃນການປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດພະຍາດ COVID-19 ແລະ ພາກສ່ວນ ຫຼື ອົງກອນທີ່ໄດ້ຮັບຜົນກະທົບໂດຍກົງຈາກ COVID-19. ພິທີຕາງໜ້າສັງຄົມມອບ-ຮັບເຄື່ອງບໍລິຈາກໃນຄັ້ງນີ້ແມ່ນເປັນຄັ້ງທີ 1 ລວມມູນຄ່າ 130.600.000 ກີບ ແລະ ໂຄງການແມ່ນຍັງສືບຕໍ່ລະດົມທຶນ ທ່ານໃດທີ່ຢາກແບ່ງປັນນ້ຳໃຈຊ່ວຍເຫຼືອແມ່ນສາມາດຮ່ວມບໍລິຈາກໄດ້,ລາຍລະອຽດຂອງໂຄງການແມ່ນສາມາດເບິ່ງຕາມລິ້ງນີ້: https://www.oneheart.la/projects/oneheartcovid19

**ຄົນລາວຫົວໃຈ❤ດຽວກັນ ຍາມສຸກຮ່ວມສຸກຍາມທຸກຮ່ວມທຸກບໍ່ຖິ້ມກັນ!**

BCEL One Heart ຫົວໃຈດວງດຽວກັນ

(ສະດວກ ວ່ອງໄວ ໂປ່ງໃສ)

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

ທັນສະໄໝ ວ່ອງໄວ ໝັ້ນໃຈ

1555 | BCEL Bank | www.bcel.com.la



ຮູບທີ1: ພິທີມອບ-ຮັບເຄື່ອງບໍລິຈາກຂອງສັງຄົມ ທີ່ ໂຮງໝໍມິດຕະພາບ



ຮູບທີ2: ພິທີມອບ-ຮັບເຄື່ອງບໍລິຈາກຂອງສັງຄົມ ທີ່ ໂຮງໝໍມະໂຫສົດ



ຮູບທີ3: ພິທີມອບ-ຮັບເຄື່ອງບໍລິຈາກຂອງສັງຄົມ ທີ່ ໂຮງໝໍສູນກາງ 103 ກອງທັບ



ຮູບທີ4: ພິທີມອບ-ຮັບເຄື່ອງບໍລິຈາກຂອງສັງຄົມ ທີ່ ໂຮງໝໍເສດຖາທິຣາດ



[illegible]



ຮູບທີ6: ພິທີມອບ-ຮັບເຄື່ອງບໍລິຈາກຂອງສັງຄົມ ທີ່ ຫ້ອງການປົກຄອງເມືອງບໍລິຄັນ



ຮູບທີ7: ພິທີມອບ-ຮັບເຄື່ອງບໍລິຈາກຂອງສັງຄົມ ທີ່ ໂຮງໝໍເມືອງປາກງື່ມ